ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

3613 -

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ................/ກຊສ

ນະຄອນຫຼວງວຽງຈັນ, ວັນທີ 24 ມິຖຸນາ 2022

# ຂໍ້ຕົກລົງ
# ວ່າດ້ວຍຫ້ອງທົດລອງສິ່ງແວດລ້ອມ

- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 573/ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມໜັງສືສະເໜີຂອງສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 552/ກຊສ.ສຄຊສ, ລົງວັນທີ 29 ເມສາ 2022.

**ລັດຖະມົນຕີ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ລະບຽບການ, ວິທີການ, ຂັ້ນຕອນ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວິຊາການຫ້ອງທົດລອງສິ່ງແວດລ້ອມ ເພື່ອຮັບປະກັນການເຄື່ອນໄຫວ ແລະ ການດຳເນີນກິດຈະການຫ້ອງທົດລອງດັ່ງກ່າວ ໃຫ້ມີຄຸນນະພາບ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແນໃສ່ເຮັດໃຫ້ການຄົ້ນຄວ້າ ແລະ ວິໄຈກ່ຽວກັບຄຸນນະພາບນ້ຳ, ອາກາດ, ດິນ, ສິ່ງລົບກວນ ແລະ ສານເຄມີອັນຕະລາຍ ໃຫ້ຖືກຕ້ອງ ແລະ ຊັດເຈນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ຫ້ອງທົດລອງສິ່ງແວດລ້ອມ**

ຫ້ອງທົດລອງສິ່ງແວດລ້ອມ ແມ່ນ ສະຖານທີ່ສຳລັບການຄົ້ນຄວ້າ ແລະ ວິໄຈທາງດ້ານວິທະຍາສາດ ກ່ຽວກັບມາດຕະຖານວິທີການວິໄຈຄຸນນະພາບ ນ້ຳ, ອາກາດ, ດິນ, ສິ່ງລົບກວນ ແລະ ສານເຄມີອັນຕະລາຍ. ຫ້ອງທົດລອງສິ່ງແວດລ້ອມ ເປັນສະຖານທີ່ ຕ້ອງມີການຄວບຄຸມສະເພາະ, ມີລະບົບຄວາມປອດໄພ ແລະ ມີລະບົບການກຳຈັດສິ່ງເສດເຫຼືອ.

ມາດຕາ 3 ການອະທິບາຍຄຳສັບ

1. **ພະນັກງານວິໄຈ** ໝາຍເຖິງ ພະນັກງານວິຊາການ, ຊ່ຽວຊານປະຈຳຫ້ອງທົດລອງ ຊຶ່ງເປັນຜູ້ດຳເນີນການວິໄຈຕາມວິທີມາດຕະຖານ, ຄວບຄຸມຄຸນນະພາບການວິໄຈ, ຮັກສາສະພາບຕົວຢ່າງ, ກະກຽມເຄື່ອງມືອຸປະກອນ, ບັນທຶກຂໍ້ມູນຜົນການວິໄຈ ແລະ ລາຍງານຜົນການວິໄຈ;

2. **ສິ່ງລົບກວນ** ໝາຍເຖິງ ມົນລະພິດທີ່ເກີດຈາກການກະທຳຂອງມະນຸດ ເປັນຕົ້ນ ສຽງ, ແສງ, ສີ, ກິ່ນ, ຄວາມສັ່ນສະເທືອນ ແລະ ຄວາມຮ້ອນ ທີ່ເກີນມາດຕະຖານສິ່ງແວດລ້ອມ ຊຶ່ງສົ່ງຜົນກະທົບຕໍ່ຊີວິດ, ສຸຂະພາບຂອງ ຄົນ, ສັດ, ພືດ, ສິ່ງມີຊີວິດ ແລະ ລະບົບນິເວດອື່ນໆ;

3. **APHA (American Public Health Association)** ໝາຍເຖິງ ສະມາຄົມສາທາລະນະສຸກຂອງອາເມລິກາ;

4. **AWWA (American Water Works Association)** ໝາຍເຖິງ ສະມາຄົມວຽກງານນ້ຳ ຂອງອາເມລິກາ;

5. **WEF (Water Environment Federation)** ໝາຍເຖິງ ສະຫະພັນນ້ຳ ແລະ ສິ່ງແວດລ້ອມ.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ ແລະ ການຂຶ້ນບັນຊີ ຫ້ອງທົດລອງສິ່ງແວດລ້ອມ

ມາດຕາ 5 ປະເພດຫ້ອງທົດລອງສິ່ງແວດລ້ອມ

ຫ້ອງທົດລອງສິ່ງແວດລ້ອມ ແບ່ງອອກເປັນ ສອງ ປະເພດ ດັ່ງນີ້:

1. ຫ້ອງທົດລອງສິ່ງແວດລ້ອມຂອງລັດ;
2. ຫ້ອງທົດລອງສິ່ງແວດລ້ອມຂອງເອກະຊົນ.

ມາດຕາ 6 ຫ້ອງທົດລອງສິ່ງແວດລ້ອມຂອງລັດ

ຫ້ອງທົດລອງສິ່ງແວດລ້ອມຂອງລັດ ແມ່ນ ຫ້ອງທົດລອງທີ່ຄຸ້ມຄອງ ແລະ ນຳໃຊ້ ໂດຍອົງການຈັດຕັ້ງຂອງລັດ ເພື່ອເປົ້າໝາຍໃນການຄົ້ນຄວ້າ ແລະ ໃຫ້ການບໍລິການວິໄຈຄຸນນະພາບສິ່ງແວດລ້ອມ ເປັນຕົ້ນ ຄຸນນະພາບ ນ້ຳ, ອາກາດ, ດິນ, ສິ່ງລົບກວນ.

ອົງການຈັດຕັ້ງຂອງລັດ ທີ່ໄດ້ດຳເນີນການເຄື່ອນໄຫວຫ້ອງທົດລອງສິ່ງແວດລ້ອມ ຕ້ອງໄດ້ຂຶ້ນບັນຊີຫ້ອງທົດລອງສິ່ງແວດລ້ອມ ນຳສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ມາດຕາ 7 ຫ້ອງທົດລອງສິ່ງແວດລ້ອມຂອງເອກະຊົນ

ຫ້ອງທົດລອງສິ່ງແວດລ້ອມຂອງເອກະຊົນ ແມ່ນ ຫ້ອງທົດລອງທີ່ອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບການໃຫ້ບໍລິການຫ້ອງທົດລອງສິ່ງແວດລ້ອມ ເພື່ອເປົ້າໝາຍໃນການຄົ້ນຄວ້າ ແລະ ໃຫ້ການບໍລິການວິໄຈຄຸນນະພາບສິ່ງແວດລ້ອມ ເປັນຕົ້ນ ຄຸນນະພາບ ນ້ຳ, ອາກາດ, ດິນ, ສິ່ງລົບກວນ. ຫ້ອງທົດລອງດັ່ງກ່າວ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ. ຈາກນັ້ນ, ຈຶ່ງສະເໜີຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ນຳສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ.

ສຳລັບຫ້ອງທົດລອງສິ່ງແວດລ້ອມຂອງເອກະຊົນ ທີ່ນຳໃຊ້ເພື່ອເປົ້າໝາຍການຄົ້ນຄວ້າວິໄຈຄຸນນະພາບສິ່ງແວດລ້ອມ ຮັບໃຊ້ວຽກງານຂອງຕົນ ເຊັ່ນ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕ້ອງໄດ້ຂຶ້ນບັນຊີຫ້ອງທົດລອງສິ່ງແວດລ້ອມ ນຳສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 8 ການຂຶ້ນບັນຊີຫ້ອງທົດລອງສິ່ງແວດລ້ອມ**

ການຂຶ້ນບັນຊີຫ້ອງທົດລອງສິ່ງແວດລ້ອມ ແມ່ນ ການບັນທຶກ, ເກັບກຳ ແລະ ສັງລວມ ຂໍ້ມູນການເຄື່ອນໄຫວ ແລະ ດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຂອງພາກລັດ ແລະ ເອກະຊົນ ນຳສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຕິດຕາມ ກວດກາ ການເຄື່ອນໄຫວ ແລະ ການປ່ຽນແປງ ກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ.

## ໝວດທີ 3
## ການອະນຸຍາດດຳເນີນທຸລະກິດ
## ກ່ຽວກັບຫ້ອງທົດລອງສິ່ງແວດລ້ອມຂອງເອກະຊົນ

**ມາດຕາ 9 ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມຂອງເອກະຊົນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ບົນພື້ນຖານການເຫັນດີເປັນລາຍລັກອັກສອນ ຈາກສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພາຍໃນກຳນົດເວລາ ສິບວັນ ທາງລັດຖະການ. ເວັ້ນເສຍແຕ່ມີຄວາມຈຳເປັນຕ້ອງກວດສອບທາງດ້ານເຕັກນິກ ຫຼື ວິຊາການ ຕ້ອງໃຊ້ເວລາແກ່ຍາວກວ່ານັ້ນ.

**ມາດຕາ 10 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມຂອງເອກະຊົນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໃບທະບຽນວິສາຫະກິດຫ້ອງທົດລອງສິ່ງແວດລ້ອມ;
2. ມີສະຖານທີ່, ແຜນຜັງ ຫ້ອງທົດລອງທີ່ເໝາະສົມ;
3. ມີຜູ້ຄວບຄຸມຫ້ອງທົດລອງສິ່ງແວດລ້ອມ ທີ່ມີວຸດທິການສຶກສາລະດັບປະລິນຍາໂທຂຶ້ນໄປ ໃນສາຂາວິຊາ ເຄມີ, ວິທະຍາສາດ-ສິ່ງແວດລ້ອມ, ວິທະຍາສາດທົ່ວໄປ ຫຼື ສາຂາອື່ນທີ່ກ່ຽວຂ້ອງ ແລະ ມີປະສົບການດ້ານການວິໄຈ ຢ່າງໜ້ອຍ ຫ້າ ປີ;
4. ມີພະນັກງານວິໄຈປະຈຳຫ້ອງທົດລອງສິ່ງແວດລ້ອມ ຢ່າງໜ້ອຍ ສາມ ຄົນ ທີ່ມີວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ໃນສາຂາວິຊາເຄມີ, ວິທະຍາສາດ-ສິ່ງແວດລ້ອມ, ວິທະຍາສາດທົ່ວໄປ ຫຼື ສາຂາອື່ນທີ່ກ່ຽວຂ້ອງ ແລະ ມີປະສົບການດ້ານການວິໄຈ ຢ່າງໜ້ອຍ ສາມ ປີ;
5. ຜູ້ຄວບຄຸມ ແລະ ພະນັກງານວິໄຈ ປະຈຳຫ້ອງທົດລອງສິ່ງແວດລ້ອມ ຕ້ອງສຳເນົາ ປະກາດສະນີຍະບັດ, ບັດປະຈຳຕົວ ຫຼື ສຳມະໂນຄົວ, ໜັງສືຢັ້ງຢືນການຜ່ານງານ ແລະ ຊີວະປະຫວັດ;
6. ວິທີມາດຕະຖານ ໃນການວິໄຈຫາປະລິມານມົນລະພິດ ເປັນຕົ້ນ ວິທີມາດຕະຖານ ສຳລັບການວິໄຈ ນ້ຳ ແລະ ນ້ຳເປື້ອນ (Standard Method For the Examination of Water and Wastewater) ຕາມມາດຕະຖານຂອງ APHA, AWWA ແລະ WEF ຢ່າງພຽງພໍ;
7. ເຄື່ອງມື ແລະ ອຸປະກອນຮັບປະກັນຄວາມປອດໄພໃນຫ້ອງທົດລອງ ເປັນຕົ້ນ ອຸປະກອນລ້າງຮ່າງກາຍສຸກເສີນ, ອຸປະກອນດັບໄຟ, ໜ້າກາກ, ຜ້າປິດດັງ, ເກີບປ້ອງກັນຄວາມປອດໄພ, ແວ່ນຕາ, ຖົງມື, ເສື້ອກາວ, ລະບົບລະບາຍອາກາດ, ຕູ້ດູດຄວັນ, ອຸປະກອນພະຍາບານ ແລະ ຢາປະຖົມພະຍາບານເບື້ອງຕົ້ນ;

8. ມີລະບົບການຈັດການສິ່ງເສດເຫຼືອ ທີ່ຖືກຕ້ອງຕາມຫຼັກວິຊາການ.

**ມາດຕາ 11 ຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມຂອງເອກະຊົນ**

ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມຂອງເອກະຊົນ ປະກອບມີຂັ້ນຕອນດັ່ງນີ້:

1. ການຍື່ນຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ;
2. ການຮັບ ແລະ ກວດກາເອກະສານ;
3. ການກວດກາຫ້ອງທົດລອງສິ່ງແວດລ້ອມ;
4. ການອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ.

**ມາດຕາ 12 ການປະກອບເອກະສານ ຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຂອງເອກະຊົນ**

ເອກະສານປະກອບ ຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ;
2. ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດດຳເນີນວິສາຫະກິດ;
3. ບົດວິພາກເສດຖະກິດ-ເຕັກນິກ;
4. ຊີວະປະຫວັດ, ສຳເນົາໃບປະກາດສະນີຍະບັດຂອງຜູ້ຄວບຄຸມ ແລະ ພະນັກງານວິໄຈ ທີ່ເຮັດວຽກຢູ່ຫ້ອງທົດລອງ ລວມທັງສຳເນົາບັດປະຈຳຕົວ ຫຼື ໃບຢັ້ງຢືນທີ່ຢູ່ ແລະ ສຳມະໂນຄົວ;
5. ເຄື່ອງມື ແລະ ອຸປະກອນທີ່ຮັບໃຊ້ໃນການວິໄຈ;
6. ທາດເຄມີທີ່ນຳໃຊ້ເຂົ້າໃນການວິໄຈ;
7. ແຜນທີ່, ທີ່ຕັ້ງຂອງຫ້ອງທົດລອງ;
8. ແຜນຜັງຂອງຫ້ອງທົດລອງ ພ້ອມທັງລະບົບຄວາມປອດໄພຂອງຫ້ອງທົດລອງ;
9. ເອກະສານອື່ນທີ່ກ່ຽວຂ້ອງ.

ໃນກໍລະນີ ທີ່ຫ້ອງທົດລອງທີ່ໄດ້ດຳເນີນການມາກ່ອນໜ້າ ຕ້ອງໄດ້ລາຍງານການປະຕິບັດວຽກງານ, ມາດຕະຖານ ແລະ ຜົນວິໄຈ ພ້ອມດ້ວຍຮູບຖ່າຍໃນການປະຕິບັດວຽກງານດັ່ງກ່າວ.

**ມາດຕາ 13 ການຮັບ ແລະ ກວດກາເອກະສານ**

ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ກວດກາຄວາມຖືກຕ້ອງຄົບຖ້ວນຂອງເອກະສານໃນຊຸດຄຳຮ້ອງພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ໄດ້ຮັບຊຸດຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ. ໃນກໍລະນີຫາກເຫັນວ່າເອກະສານໃນຊຸດຄຳຮ້ອງຫາກບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ເປັນລາຍລັກອັກສອນ ເພື່ອນຳໄປປັບປຸງແກ້ໄຂຄືນ.

**ມາດຕາ 14 ການກວດກາຫ້ອງທົດລອງສິ່ງແວດລ້ອມ**

ພາຍຫຼັງທີ່ໄດ້ຮັບເອກະສານຄຳຮ້ອງ ຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຄົບຖ້ວນແລ້ວ, ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ລົງກວດກາຕົວຈິງຢູ່ສະຖານທີ່ຕັ້ງຫ້ອງທົດລອງສິ່ງແວດລ້ອມ. ຈາກນັ້ນ, ຕ້ອງລາຍງານລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຕົກລົງການອອກອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ.

**ມາດຕາ 15 ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ**

ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ພາຍໃນກຳນົດ ຫ້າ ວັນລັດຖະການ ນັບແຕ່ວັນທີ່ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕົກລົງເຫັນດີໃຫ້ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ເປັນຕົ້ນໄປ. ໃນກໍລະນີທີ່ບໍ່ເຫັນດີ, ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ໃຫ້ແກ່ຜູ້ສະເໜີຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຮັບຊາບ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ພ້ອມດ້ວຍເຫດຜົນ.

## ໝວດທີ 4
## ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ

**ມາດຕາ 16 ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ແມ່ນ ໃບຢັ້ງຢືນການອະນຸຍາດ ທີ່ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ອອກໃຫ້ແກ່ນິຕິບຸກຄົນ ເພື່ອເຄື່ອນໄຫວດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ.

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້ຕາມການສະເໜີຂອງເຈົ້າຂອງກິດຈະການດັ່ງກ່າວ.

**ມາດຕາ 17 ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ**

ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ແມ່ນ ການບັນທຶກ ແລະ ການຢັ້ງຢືນຄືນໃໝ່ ໃນການຕໍ່ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ທີ່ໝົດອາຍຸ ສາມ ປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້.

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຕ້ອງການຕໍ່ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ໃຫ້ຍື່ນຄຳຮ້ອງຂໍຕໍ່ນຳສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ອນໃບອະນຸຍາດດັ່ງກ່າວຈະໝົດອາຍຸພາຍໃນກຳນົດເວລາ ເກົ້າສິບວັນ. ສຳລັບການຕໍ່ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13, 14 ແລະ 15 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີທີ່ບໍ່ສະເໜີຕໍ່ອາຍຸ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຕາມທີ່ກຳນົດໄວ້ໃນວັກ ສອງ ຂອງມາດຕານີ້ ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງອອກແຈ້ງການໃຫ້ຢຸດຕິໃບອະນຸຍາດການດຳເນີນທຸລະກິດດັ່ງກ່າວ.

**ມາດຕາ 18 ການໂອນ, ການປ່ຽນແປງ ການດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ**

ເຈົ້າຂອງດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ທີ່ມີຈຸດປະສົງໂອນໃບອະນຸຍາດຂອງຕົນໃຫ້ເຈົ້າຂອງຜູ້ໃໝ່ ຕ້ອງສະເໜີຕໍ່ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອປ່ຽນຊື່ເຈົ້າຂອງ ຫຼື ປ່ຽນຊື່ບໍລິສັດໃນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ. ເຈົ້າຂອງໃບອະນຸຍາດຜູ້ໃໝ່ ຕ້ອງສືບຕໍ່ປະຕິບັດສິດ ແລະ ພັນທະ ຕາມທີ່ກຳນົດໄວ້ໃນໃບອະນຸຍາດດັ່ງກ່າວ.

ເຈົ້າຂອງດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ທີ່ມີຈຸດປະສົງປ່ຽນແປງການດຳເນີນທຸລະກິດ ເປັນຕົ້ນ ການຂະຫຍາຍ, ການປ່ຽນແປງວິທີມາດຕະຖານການວິໄຈ, ການເພີ່ມ ຫຼື ຫຼຸດ ຂະໜາດຂອງຫ້ອງທົດລອງສິ່ງແວດລ້ອມທີ່ມີຢູ່ແລ້ວ ຕ້ອງສະເໜີຕໍ່ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຂໍໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຄືນໃໝ່.

**ມາດຕາ 19 ການໂຈະ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຈະຖືກໂຈະ ຕາມແຕ່ລະກໍລະນີ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ການດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ທີ່ບໍ່ສົ່ງຜົນກະທົບຮ້າຍແຮງ;

2. ນຳໃຊ້ວິທີມາດຕະຖານການວິໄຈ, ເຕັກນິກບໍ່ຖືກຕ້ອງກັບຫຼັກການທາງດ້ານວິທະຍາສາດ;

3. ນຳໃຊ້ເຄື່ອງມື, ວັດຖຸປະກອນ ຫຼື ເຕັກໂນໂລຊີ ທີ່ບໍ່ເໝາະສົມໃນການດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ;

4. ບໍ່ມີວິຊາການ ແລະ ຊ່ຽວຊານສະເພາະດ້ານໃນການວິໄຈ;

5. ບໍ່ປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ ໃນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ;

6. ບໍ່ປະຕິບັດຕາມບົດວິພາກເສດຖະກິດ-ເຕັກນິກ ຕາມທີ່ໄດ້ກຳນົດໄວ້ໃນເວລາສະເໜີຂໍໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ;

7. ບໍ່ເສຍອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມກົດໝາຍ ແລະ ລະບຽບການ;

8. ປິດບັງ, ເຊື່ອງອຳ ແລະ ໃຫ້ຂໍ້ມູນ ກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ;

9. ບໍ່ປະຕິບັດການແກ້ໄຂບັນຫາສິ່ງແວດລ້ອມ ພາຍຫຼັງໄດ້ຮັບໜັງສືແຈ້ງເຕືອນ ຈາກສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ຖ້າຫາກພົບເຫັນກໍລະນີໃດໜຶ່ງ ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຄົ້ນຄວ້າ ແລະ ລາຍງານຂໍຄຳເຫັນ ຈາກລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ອນຈະອອກແຈ້ງການໂຈະໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ໂດຍມີກຳນົດເວລາທີ່ແນ່ນອນ ຕາມແຕ່ລະກໍລະນີ ເພື່ອໃຫ້ເຈົ້າຂອງດຳເນີນທຸລະກິດດັ່ງກ່າວ ປັບປຸງແກ້ໄຂຂໍ້ບົກຜ່ອງ ທີ່ເກີດຈາກການດຳເນີນທຸລະກິດຂອງຕົນ.

**ມາດຕາ 20 ການຖອນ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຈະຖືກຖອນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມຢ່າງຮ້າຍແຮງບໍ່ສາມາດແກ້ໄຂ ແລະ ປັບປຸງຄືນໄດ້;

2. ບໍ່ປະຕິບັດຕາມເງື່ອນໄຂ ທີ່ກຳນົດໄວ້ໃນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຊຶ່ງກໍ່ຄວາມເສຍຫາຍຢ່າງຮ້າຍແຮງ ແລະ ບໍ່ສາມາດແກ້ໄຂໄດ້;

3. ບໍ່ປະຕິບັດພັນທະດ້ານສິ່ງແວດລ້ອມ ພາຍຫຼັງໄດ້ຮັບແຈ້ງການ ຈາກສະຖາບັນຄົ້ນຄ້ວາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

4. ບໍ່ໃຊ້ຈ່າຍຄ່າເສຍຫາຍດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ຕົນກໍ່ຂຶ້ນ;

5. ປິດບັງ, ເຊື່ອງອຳ ແລະ ໃຫ້ຂໍ້ມູນກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງວດລ້ອມ ທີ່ບໍ່ຖືກຕ້ອງ ແລະ ສອດຄ່ອງກັບຄວາມເປັນຈິງ ທີ່ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;

6. ບໍ່ດຳເນີນການແກ້ໄຂບັນຫາໃດໜຶ່ງພາຍຫຼັງທີ່ຖືກໂຈະ ແລະ ໄດ້ຮັບແຈ້ງເຕືອນຈາກສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

ພາຍຫຼັງສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຕ້ອງສະເໜີໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ພິຈາລະນາຍຸບເລີກວິສາຫະກິດ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການກວດກາວິຊາການ
## ກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ

### ມາດຕາ 21 ການກວດກາວິຊາການ ກ່ຽວກັບ ການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ

ການກວດກາວິຊາການ ກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ແມ່ນ ການດຳເນີນການຕິດຕາມ ກວດກາ ການຈັດຕັ້ງປະຕິບັດກິດຈະການຫ້ອງທົດລອງສິ່ງແວດລ້ອມ ຕາມເງື່ອນໄຂຂອງໃບອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ, ມາດຕະຖານວິທີການວິໄຈ, ເຄື່ອງມື ແລະ ອຸປະກອນຮັບໃຊ້, ບຸກຄະລາກອນທີ່ເຮັດການວິໄຈ, ລະບົບຄວາມປອດໄພ ແລະ ລະບົບການກຳຈັດສິ່ງເສດເຫຼືອທີ່ເກີດຈາກການວິໄຈ.

ຄວາມຮັບຜິດຊອບ ການກວດກາວິຊາການ ກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ມີດັ່ງນີ້:

1. ຜູ້ດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ;
2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ;
3. ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

### ມາດຕາ 22 ການກວດກາວິຊາການໂດຍຜູ້ດຳເນີນກິດຈະການກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ

ການກວດກາວິຊາການ ໂດຍຜູ້ດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ແມ່ນ ການກວດກາວິຊາການຂັ້ນທຳອິດທີ່ດຳເນີນ ໂດຍເຈົ້າຂອງຫ້ອງທົດລອງເອງ ສາມ ເດືອນ, ຫົກ ເດືອນ ແລະ ປີ ເພື່ອຮັບປະກັນການຈັດຕັ້ງປະຕິບັດກິດຈະການກ່ຽວກັບຫ້ອງທົດລອງສິ່ງແວດລ້ອມຂອງຕົນ ໃຫ້ມີປະສິດທິພາບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ວັກ ໜຶ່ງ ຂອງຂໍ້ຕົກລົງສະບັບນີ້ ແລ້ວລາຍງານຜົນການກວດກາດັ່ງກ່າວ ພາຍໃນ ເຈັດວັນລັດຖະການ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

### ມາດຕາ 23 ການກວດກາວິຊາການໂດຍພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ຕ້ອງດຳເນີນການຕິດຕາມ ກວດກາ ຫົກ ເດືອນ ຕໍ່ຄັ້ງ ໂດຍສົມທົບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ເພື່ອຊຸກຍູ້ ແລະ ຮັບປະກັນໃຫ້ການຈັດຕັ້ງປະຕິບັດກິດຈະການກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ໃຫ້ມີປະສິດທິພາບ ຕາມການກຳນົດໄວ້ໃນມາດຕາ 21 ວັກ ໜຶ່ງ ຂອງຂໍ້ຕົກລົງສະບັບນີ້ ແລ້ວລາຍງານຜົນການກວດກາ ໃຫ້ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ໃນກໍລະນີຈຳເປັນ ແລະ ຮີບດ່ວນ ສາມາດເພີ່ມ ຫຼື ຫຼຸດຈຳນວນຄັ້ງ ໃນການຕິດຕາມ ກວດກາ ກໍໄດ້ ແລະ ຍັງສາມາດສຸ່ມກວດ ໃນກໍລະນີຫາກເກີດເຫດການສຸກເສີນທີ່ເກີດຈາກຫ້ອງທົດລອງສິ່ງແວດລ້ອມ.

### ມາດຕາ 24 ການກວດກາວິຊາການ ໂດຍສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງດຳເນີນການຕິດຕາມ ກວດກາ ໜຶ່ງ ຄັ້ງຕໍ່ປີ ໂດຍສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ເພື່ອຊຸກຍູ້

ແລະ ຮັບປະກັນໃຫ້ການຈັດຕັ້ງປະຕິບັດກິດຈະການຫ້ອງທົດລອງສິ່ງແວດລ້ອມ ໃຫ້ມີປະສິດທິພາບ ຕາມການກຳນົດໄວ້ໃນມາດຕາ 21 ວັກ ໜຶ່ງ ຂອງຂໍ້ຕົກລົງສະບັບນີ້ ແລ້ວລາຍງານຜົນການກວດກາ ໃຫ້ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ໃນກໍລະນີຈຳເປັນ ແລະ ຮີບດ່ວນ ສາມາດເພີ່ມຈຳນວນຄັ້ງ ໃນການຕິດຕາມ ກວດກາກໍໄດ້ ແລະ ຍັງສາມາດສຸ່ມກວດໃນກໍລະນີຫາກເກີດເຫດການສຸກເສີນ ທີ່ເກີດຈາກຫ້ອງທົດລອງສິ່ງແວດລ້ອມ.

**ມາດຕາ 25 ມາດຕະການຕໍ່ຜົນການຈັດຕັ້ງປະຕິບັດການແກ້ໄຂຜົນຂອງການກວດກາວິຊາການກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ**

ໃນກໍລະນີເຈົ້າຂອງກິດຈະການກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ຫາກແກ້ໄຂບໍ່ຖືກຕ້ອງ ຫຼື ບໍ່ແກ້ໄຂບັນຫາຜົນຂອງການກວດກາວິຊາການ ຕາມແຈ້ງການ ຫຼື ຜົນການຕິດຕາມ ກວດກາວິຊາການ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຖ້າແກ້ໄຂຜົນຂອງການຕິດຕາມ ກວດກາວິຊາການ ຫ້ອງທົດລອງສິ່ງແວດລ້ອມ ບໍ່ຖືກຕ້ອງຕາມແຈ້ງການ ຫຼື ຜົນການຕິດຕາມ ກວດກາດັ່ງກ່າວ ຈະຖືກແຈ້ງເຕືອນເປັນລາຍລັກອັກສອນ ຈາກສະຖາບັນຄົ້ນຄວ້າຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍກຳນົດມາດຕະການໃຫ້ປັບປຸງ ແລະ ແກ້ໄຂຄືນໃໝ່ ພາຍໃນກຳນົດເວລາທີ່ແນ່ນອນ ຕາມແຕ່ກໍລະນີ ພ້ອມທັງເຮັດບົດບັນທຶກຮ່ວມກັນໄວ້;

2. ຖ້າບໍ່ແກ້ໄຂຜົນຂອງການຕິດຕາມ ກວດກາວິຊາການ ຫ້ອງທົດລອງສິ່ງແວດລ້ອມ ຍ້ອນເຈດຕະນາ ຫຼື ເມີນເສີຍ ຕາມແຈ້ງການຜົນການຕິດຕາມ ກວດກາດັ່ງກ່າວ ຫຼື ຕາມການແຈ້ງເຕືອນທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂ້າງເທິງນີ້ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ດັ່ງນີ້:

– ເທື່ອທີ 1 ໃຫ້ໂຈະໃບອະນຸຍາດການດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ຊົ່ວຄາວ ພ້ອມທັງເຮັດບົດບັນທຶກຮ່ວມກັນໄວ້ ໂດຍກຳນົດມາດຕະການໃຫ້ປັບປຸງ ແລະ ແກ້ໄຂຄືນໃໝ່ ພາຍໃນກຳນົດເວລາທີ່ແນ່ນອນ ຕາມແຕ່ລະກໍລະນີ;

– ເທື່ອທີ 2 ຖ້າຫາກບໍ່ປະຕິບັດຕາມກໍລະນີຂີດໜ້າ 1 ເທິງນີ້ ໃຫ້ຖອນໃບອະນຸຍາດການດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ພ້ອມທັງສະເໜີໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ພິຈາລະນາຍຸບເລີກວິສາຫະກິດ ຕາມກົດໝາຍ ແລະ ລະບຽບການ ແລະ ຮັບຜິດຊອບຄ່າເສຍຫາຍຕົວຈິງທີ່ຕົນໄດ້ກໍ່ຂຶ້ນ.

ໃນກໍລະນີເປັນການກະທຳຜິດທາງອາຍາຈະຖືກດຳເນີນຄະດີ ແລະ ລົງໂທດຕາມປະມວນກົດໝາຍອາຍາ.

## ໝວດທີ 6
## ສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ

**ມາດຕາ 26 ສິດຂອງຜູ້ດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ**

ຜູ້ດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ທີ່ໄດ້ຮັບການອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ມີສິດ ດັ່ງນີ້:

1. ໂຄສະນາ ແລະ ເຜີຍແຜ່ ກ່ຽວກັບການບໍລິການຂອງຫ້ອງທົດລອງຕົນ;

2. ເກັບກຳຂໍ້ມູນຕົວຈິງຢູ່ພາກສະໜາມ ເພື່ອຄົ້ນຄວ້າວິໄຈທາດເຄມີ;

3. ປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ;

4. ທວງເອົາເອກະສານຕ່າງໆ ກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ນຳຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

5. ສະເໜີຂໍຄວາມເປັນທຳ ຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນຫາທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງຕົນເອງ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ພັນທະຂອງຜູ້ດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ**

ຜູ້ດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ທີ່ໄດ້ຮັບການອະນຸຍາດດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ;

2. ຮັບຜິດຊອບທົດແທນຄ່າເສຍຫາຍ ທີ່ເກີດຂຶ້ນຈາກການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ຂອງຕົນ;

3. ໃຫ້ຄວາມຮ່ວມມື, ອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນວຽກງານຂອງຫ້ອງທົດລອງ ໃຫ້ພະນັກງານທີ່ກວດສອບໃນແຕ່ລະຄັ້ງ ຫຼື ອົງການຄຸ້ມຄອງທີ່ກ່ຽວຂ້ອງ;

4. ເສຍອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມກົດໝາຍ ແລະ ລະບຽບການ;

5. ປັບປຸງ ແລະ ແກ້ໄຂຜົນກະທົບ ທີ່ເກີດຈາກການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ;

6. ແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຜົນກະທົບ ຈາກການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ;

7. ຮັບຜິດຊອບຄ່າໃຊ້ຈ່າຍການກວດກາວິຊາການ ກ່ຽວກັບການດຳເນີນກິດຈະການຫ້ອງທົດລອງສິ່ງແວດລ້ອມ ພາກສະໜາມ;

8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ຄ່າທຳນຽມກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ
## ແລະ ຄ່າບໍລິການກ່ຽວກັບການວິໄຈ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

**ມາດຕາ 28 ຄ່າທຳນຽມກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ**

ຄ່າທຳນຽມກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ປະກອບມີ ໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດຕໍ່ອາຍຸການດຳເນີນທຸລະກິດກ່ຽວກັບຫ້ອງທົດລອງສິ່ງແວດລ້ອມ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 29 ຄ່າບໍລິການກ່ຽວກັບການວິໄຈ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ຄ່າບໍລິການກ່ຽວກັບການວິໄຈ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສຳລັບພາກລັດ ແມ່ນໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ. ສຳລັບຄ່າບໍລິການກ່ຽວກັບການວິໄຈ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງພາກເອກະຊົນ ໃຫ້ປະຕິບັດຕາມການຕົກລົງເຫັນດີລະຫວ່າງຜູ້ບໍລິການ ແລະ ຜູ້ໃຊ້ບໍລິການ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 30 ການຈັດຕັ້ງປະຕິບັດ**

ສະຖາບັນຄົ້ນຄວ້າຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ອອກປຶ້ມຄູ່ມືແນະນໍາດ້ານວິຊາການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ສະຖາບັນຄົ້ນຄວ້າຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກໍານົດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ

ນ.ບຸນຄໍາ ວໍລະຈິດ